# OKANOGAN-WENATCHEE NATIONAL FOREST



## ການເກັບເຫັດໂມເຣລເພື່ອການຄ້າ ປີ 2020

## ປ່າຄຸ້ມຄອງແຫ່ງຊາດໂອກາໂນວາ-ເວນັດຈີ

### ໃບອະນຸຍາດ

ການເກັບເຫັດເພື່ອການຄ້າທຸກປະເພດໃນເຂດປ່າໄມ້ Entiat ແລະ Methow Valley ຈຳເປັນຕ້ອງມີໃບອະນຸຍາດ.
ທຸກຄົນຈຳເປັນຕ້ອງມີໃບອະນຸຍາດເກັບເຫັດເອົາໄວ້ຢູ່ກັບໂຕຕະຫຼອດເວລາໃນເວລາທີ່ໄປເກັບເຫດ.

ໃບອະນຸຍາດເພື່ອການຄ້າແມ່ນມີໃຫ້ທີ່ຫ້ອງການເຂດປ່າໄມ້ Methow Valley, Chelan, ແລະ Entiat ແລະຫ້ອງການໃຫຍ່ປ່າໄມ້ ໃນລະຫວ່າງຊົ່ວໂມງເຮັດວຽກປົກກະຕິ ວັນຈັນຮອດວັນສຸກ.

ຂໍ້ກຳນົດດ້ານການຂົນສົ່ງຜະລິດຕະພັນຈາກປ່າໄມ້ຂອງຣັຖວໍຊິງຕັນ ສາມາດເບິ່ງທີ່ກົດລະບຽບ RCW 76.48.060 ທີ່
https://apps.let.wa.gov/rcw/default.aspx?cite=76.48&full=true#76.48.061

ເພື່ອປົກປ້ອງຄຸ້ມຄອງບ່ອນຢູ່ອາໄສຂອງປາທີ່ອ່ອນໄຫວ, ຫ້າມຍ່າງໃນແມ່ນ້ຳ, ລຳທານ, ຫຼື ຫ້ວຍ ເພື່ອເຂົ້າໄປໃນເຂດພື້ນທີ່ເກັບກ່ຽວ.
ເພື່ອປົກປ້ອງຄຸ້ມຄອງຊັບພະຍາກອນທີ່ມີຄຸນຄ່າທາງວັດທະນະທັມ, ຫ້າມຍ້າຍ ຫຼື ທຳລາຍເຄື່ອງຂອງ ຫຼື ສິ່ງປະດິດທາງປະວັດສາດ ທີ່ພົບເຫັນຢູ່ໃນເຂດປ່າໄມ້ແຫ່ງຊາດ

**ໃບອະນຸຍາດຕາມລະດູການແມ່ນໃຊ້ການໄດ້ຕັ້ງແຕ່ວັນທີ 1 ພຶດສະພາ ຮອດ 30 ກໍຣະກະດາ 2020**

### ການເກັບເຫັດມາຮັບໃຊ້ຄອບຄົວ

ປະມານ**ຫ້າ**ແກນລອນຕໍ່ວັນແມ່ນບໍ່ເສັຽຄ່າ. ຂໍໃຫ້ຕິດຕໍ່ຫ້ອງການຄຸ້ມຄອງປ່າເພື່ອຮູ້ຂໍ້ມູນຕື່ມ.
ພິມຂໍ້ມູນການອະນຸຍາດ ແລະແຜນທີ່ໄດ້ຟຣີ ຈາກເວັບໄຊ **fs.usda.gov/goto/okawen/mushroom** ຫຼື ຕິດຕໍ່ຫ້ອງການ ຄຸ້ມຄອງປ່າເພື່ອຮູ້ຂໍ້ມູນຕື່ມ.
ບຸກຄົນທີ່ມີໃບອະນຸຍາດເກັບເຫັດເພື່ອການຄ້າຈະສາມາດໄປເກັບເຫັດໄດ້ສະເພາະຈາກຂົງເຂດທີ່ບົ່ງໄວ້ໃນແຜນທີເກັບເຫັດຂອງເຂດຮັກສາປ່າສະຫງວນ.

### ການຕັ້ງແຄ້ມ

ບໍລິເວນຕັ້ງຄ້າຍພັກແຮມແມ່ນມີໄວ້ສຳລັບບັນດາຜູ້ເກັບເຫັດເພື່ອການຄ້າທີ່ວາງແຜນນອນຄ້າງຄືນໃນເຂດປ່າໄມ້ແຫ່ງຊາດໃນພື້ນທີ່ Entiat.
ຜູ້ເກັບເຫັດເພື່ອການຄ້າແມ່ນຈຳເປັນຕ້ອງນຳໃຊ້ຄ້າຍພັກທີ່ກຳນົດໄວ້ໃຫ້ເທົ່ານີ້, ຊຶ່ງສະແດງໄວ້ຢູ່ເທິງແຜນທີ່ທີ່ຄັດຕິດມາ.
ຜູ້ເກັບເຫັດເພື່ອການຄ້າບໍ່ຄວນຈະຕັ້ງຄ້າຍພັກພາຍໃນລະຍະ 200 ຟຸດຈາກແຫຼ່ງນ້ຳ, ລຳທານ, ທະເລສາບ, ພື້ນທີ່ອະນຸລັກແຄມນ້ຳ ແລະເຂດພື້ນທີ່ປຽກ ເຊັ່ນພື້ນທີ່ຊຸ່ມນ້ຳ ແລະ ທົ່ງຫຍ້າ (ເວັ້ນແຕ່ວ່າພື້ນທີ່ນັ້ນໄດ້ຖືກກຳນົດໄວ້ ຫຼື ປັກຫຼຸງໄວ້ສຳລັບໃຫ້ຜູ້ເກັບກ່ຽວນຳໃຊ້), ຈຸດເລີ່ມຕົ້ນຂອງເສັ້ນທາງຍ່າງ, ຫຼື ບ່ອນຈອດຣົຖບໍລິເວັນຈຸດເລີ່ມຕົ້ນ, ຫຼື ສະຖານທີ່ສຳລັບເຮັດກິດຈະກຳທີ່ມີການນຳໃຊ້ຢູ່ເລື້ອຍໆ ຫຼື ເຂດພື້ນທີ່ນຳໃຊ້ພິເສດ.
ໃບອະນຸຍາດນີ້ອະນຸຍາດຜູ້ນຳໃຊ້ໃຫ້ສາມາດຕັ້ງຄ້າຍພັກໄດ້ສະເພາະໃນເຂດພື້ນທີ່ທີ່ກຳນົດໄວ້ເທົ່ານັ້ນ.

### ການເກັບມ້ຽນຂີ້ເຫຍື້ອ

ຈະຕ້ອງເກັບມ້ຽນຂີ້ເຫຍື້ອທຸກຢ່າງ ແລະເອົາອອກໄປຈາກທີ່ດິນປ່າຄຸ້ມຄອງແຫ່ງຊາດ ເພື່ອນຳໄປກຳຈັດໃຫ້ຖືກຕ້ອງ ເວັ້ນແຕ່ວ່າ ຜູ້ເກັບເຫັດເພື່ອການຄ້ານັ້ນໄດ້ຕັ້ງແຄ້ມໃນເຂດພື້ນທີ່ຕັ້ງແຄ້ມທີ່ກຳນົດໄວ້ ຊຶ່ງໄດ້ຈັດບ່ອນເກັບຂີ້ເຫຍື້ອໄວ້ໃຫ້.
**ການຊື້ ແລະ ການຂາຍ** ຫຼືການຕາກເຫັດຢູ່ໃນທີ່ດິນຂອງປ່າຄຸ້ມຄອງແຫ່ງຊາດ.

### ການປິດຕ່າງໆ

**ພື້ນທີ່ທີ່ປິດບໍ່ໃຫ້ເຂົ້າໄປເກັບເຫັດເພື່ອການຄ້າ ລວມມີ ເຂດສັດປ່າ, ເຂດທຳມະຊາດເພື່ອການວິໄຈ, ສະຖານທີ່ສຳລັບບໍລິຫານຄຸ້ມຄອງ, ເຂດພືດ, ເສັ້ນທາງຊົມວິວ, ເຂດຈັດກິດຈະກຳ, ບໍລິເວນຕັ້ງຄ້າຍພັກແຮມ, ແລະເຂດດິນສ່ວນບຸກຄົນ.**

ການປິດເສັ້ນທາງຈະມີຜົນບັງຄັບໃຊ້ພາຍໃນພື້ນທີ່ເກັບເຫັດທາງການຄ້າບາງບ່ອນ. ຍັງຈະມີການປິດເສັ້ນທາງຢູ່ ບາງພື້ນທີ່ບ່ອນທີ່ມີອັນຕະລາຍ ແລະເພື່ອປົກປ້ອງພື້ນເສັ້ນທາງທີ່ອ່ອນໄວ້ໄປຈົນກວ່າມັນຈະແຫ້ງ.

**ບໍ່ອະນຸຍາດໃຫ້ມີການເດີນທາງອອກນອກເສັ້ນທາງຣົຖ** ຢູ່ພາຍໃນພື້ນທີ່ທີ່ເຜົາໄໝ້. ອຸປະກອນທີ່ຕິດເຄື່ອງຈັກ, ລວມທັງ ATV ຫຼື ຣົຖຈັກແມ່ນອະນຸຍາດໃຫ້ໄດ້ພຽງແຕ່ເສັ້ນທາງທີ່ເປີດໄປສູ່ສາທາລະນະເທົ່ານັ້ນ. ທຸກອຸປະກອນທີ່ຕິດເຄື່ອງຈັກຕ້ອງຖືກກົດໝາຍທ້ອງຖະໜົນ

## ຈຳເປັນຕ້ອງມີບັດຜ່ານປ່າຄຸ້ມຄອງນອກເວັສຢູ່ຕົ້ນທາງບາງບ່ອນ

ຈຳເປັນຕ້ອງມີຄ່າທຳນຽມທີ່ໃຊ້ໜຶ່ງວັນຢູ່ໃນຕົ້ນທາງຫຼາຍບ່ອນ ແລະບ່ອນທີ່ໃຊ້ເປັນມື້. ຕ້ອງສະແດງບັດຜ່ານທີ່ນຳໃຊ້ໄດ້ໄວ້ຢູ່ໃນແກ້ວໜ້າຂອງຣົຖ ເມື່ອໃຊ້ບ່ອນທີ່ເສັຽຄ່າທຳນຽມ. ບັດຜ່ານມີຄ່າ $5 ຕໍ່ມື້ ຫຼື $30 ສຳລັບບັດຜ່ານປະຈຳປີ ແລະມີໃຫ້ຢູ່ຫ້ອງການປ່າຄຸ້ມຄອງແຫ່ງຊາດທຸກບອ່ນ ແລະບາງບ່ອນທີ່ເສັຽຄ່າທຳນຽມ.

## ການດັງໄຟໃນບ່ອນແຄ້ມ

ຈະມີການຕິດຂໍ້ຈຳກັດໃນການດັງໄຟໄວ້ຢູ່ກະດານຂ່າວຢູ່ສະຖານທີ່ຕັ້ງແຄ້ມ. ຖ້າໄດ້ຮັບອະນຸຍາດໃຫ້ດັງໄຟ:

- ໃຫ້ດັງໄຟໃນແຄ້ມ ຫຼື ໄຟເພື່ອຄວາມອົບອຸ່ນໄວ້ຂະໜາດນ້ອຍ
- ຕັ້ງແຄ້ມ ຫຼື ກໍ່ໄຟໃຫ້ຄວາມອົບອຸ່ນຢູ່ຫ່າງໄກຈາກກິ່ງໄມ້ທີ່ຫ້ອຍລົງມາ, ມີຄວາມຊັນສູງ, ຫຍ້າແຫ້ງ, ໄມ້, ຕໍໄມ້ໂດກ, ອື່ນໆ ຫຼາຍຟຸດ. ຢ່າປະປ່ອຍໄຟໃນບ່ອນແຄ້ມ ຫຼື ໄຟໃຫ້ຄວາມອົບອຸ່ນໄວ້ໂດຍບໍ່ໃສ່ໃຈ
- ໃຫ້ມີນ້ຳໄວ້ພ້ອມຫຼາຍໆ ແລະມີຊວ້ານຕັກດິນໃສ່ໄຟເມື່ອຄວບຄຸມໄຟບໍ່ໄດ້
- ເອົາໄຟຈຸ່ມລົງນ້ຳ ແລະຄົນໄປຈົນກວ່າຖ່ານທີ່ຍັງລຸກຢູ່ ແລະຖ່ານທັງໝົດເຢັນຈົນຈັບໄດ້
- ຢ່າຈອດຣົຖໄວ້ຢູ່ເທິງຫຍ້າແຫ້ງ — ຄວາມຮ້ອນຈາກລະບົບທໍ່ຄວັນຣົຖສາມາດເຮັດໃຫ້ເກີດໄຟໄດ້

## ຄວາມປອດໄພ

**ຄວາມປອດໄພໃນການຂັບຂີ່:** ເສັ້ນທາງປ່າໄມ້ຫຼາຍແຫ່ງເປັນເສັ້ນທາງເລນດຽວ. ກະຣຸນາຂັບຂີ່ຣົຖຊ້າໆ. ກຽມພ້ອມເມື່ອພົບຣົຖ, ສັດ ຫຼື ຄົນຢູ່ບ່ອນມຸມລ້ຽວ.

**ອັນຕະລາຍພາຍຫຼັງເກີດໄຟ:**

- **ການຍ່າງ:** ຫຍຽບດ້ວຍຄວາມລະມັດລະວັງ; ໄຟອາດຈະໄໝ້ຮາກໄມ້ຢູ່ ເຮັດໃຫ້ເກີດອັນຕະລາຍເວລາຍ່າງທີ່ບໍ່ສາມາດເຫັນໄດ້.
- **ຕົ້ນໄມ້ທີ່ກຳລັງລົ້ມ:** ຕົ້ນໄມ້ທີ່ຖືກໄຟໄໝ້ອາດຈະລົ້ມລົງໄດ້ທຸກເວລາ, ໂດຍບໍ່ມີການເຕືອນ; ຕ້ອງລະມັດລະວັງອັນຕະລາຍຢູ່ສະເໝີ. **ນີ້ແມ່ນອັນຕະລາຍອັນຕົ້ນຕໍ-ໃຫ້ລະວັງ!**
- **ເນື່ອງຈາກວ່າອາດຈະມີນ້ຳຖ້ວມເກີດຂຶ້ນໃນບ່ອນທີ່ໄຟໄໝ້ໄດ້, ພວກເຮົາແນະນຳໃຫ້ຜູ້ເກັບເຫັດເພື່ອການຄ້າຕິດຕາມຟັງຂ່າວສະຖານີວິທະຍຸການບໍລິການອາກາດຂອງອົງການມະຫາສະໝຸດແລະບັນຍາກາດແຫ່ງຊາດ (NOAA).** ຕິດຕາມການພະຍາກອນອາກາດ ແລະກຽມພ້ອມສຳລັບການຕິດຕາມ ແລະການເຕືອນນ້ຳຖ້ວມ. ໃຫ້ລະວັງເລື່ອງອາດຈະເກີດນ້ຳຖ້ວມຈາກຝົນຕົກຫົວນ້ຳສະຖານທີ່ຂອງທ່ານ. ຕິດຕາມສະຖານີວິທະຍຸທ້ອງຖິ່ນສຳລັບຂ່າວຄວາມປອດໄພຂອງສັງຄົມ ແລະຂໍ້ມູນນ້ຳຖ້ວມ. ສະແກນຫາວິທະຍຸຂ່າວອາກາດ NOAA ເພື່ອເບິ່ງສະພາບອາກາດທີ່ທັນກັບເວລາ; ການອອກອາກາດເຫຼົ່ານີ້ແມ່ນຕ້ອງມີເຄື່ອງສະແກນເນີ ຫຼື ເຄື່ອງຮັບວິທະຍຸພິເສດ.

## ການບໍລິການສຸກເສີນ

911 ແມ່ນເລກໂທຣບໍລິການສຸກເສີນໃນທ້ອງຖິ່ນ. ບັນດາໂຮງໝໍແມ່ນຕັ້ງຢູ່ໃນເຂດ Omak, Brewster, Chelan, ແລະ Wenatchee.

## ອົງການອື່ນໆ

**ກົມຊັບພະຍາກອນທຳມະຊາດຂອງຣັຖວໍຊິງຕັນ (DNR)** ຈະບໍ່ອອກໃບອະນຸຍາດເກັບເຫັດເພື່ອການຄ້າ. ດັ່ງນັ້ນ, ພື້ນທີ່ຂອງ DNR ແລະບ່ອນຕັ້ງແຄ້ມທີ່ພັດທະນາແລ້ວແມ່ນປິດສຳລັບຜູ້ເກັບເຫັດເພື່ອການຄ້າ. ອະນຸຍາດໃຫ້ມີການເກັບເຫັດເພື່ອໃຊ້ໃນຄອບຄົວໄດ້ໂດຍບໍ່ຕ້ອງມີ ໃບອະນຸຍາດ. ອະນຸຍາດໃຫ້ມີການເດີນທາງດ້ວຍ ATV/ORV ຢູ່ໃນເສັ້ນທາງເປີດເທົ່ານັ້ນ. ຫ້າມການເດີນທາງດ້ວຍ ATV/ORV ນອກເສັ້ນທາງ, ຢູ່ເບື້ອງຫຼັງປະຕູ, ຫຼື ຕາມເສັ້ນທາງຍ່າງເດັດຂາດ. ຢູ່ໃນບ່ອນຕັ້ງແຄ້ມທີ່ບໍ່ທັນໄດ້ພັດທະນາ ແລະກະຈັດກະຈາຍ, ຫ້າມດັງໄຟຢູ່ໃນບ່ອນຕັ້ງແຄ້ມ ແລະໃຫ້ຕັ້ງແຄ້ມຢູ່ໄດ້ແຕ່ 10 ມື້. ຂີ້ເຫຍື້ອ - ເກັບມັນໄວ້ - ຫໍ່ມັນໄວ້. ສຳລັບຂໍ້ມູນເພີ່ມເຕີມ ໃຫ້ຕິດຕໍ່ DNR ທີ່ໝາຍເລກ 509-925-8510. ທີ່ດິນທີ່ມີການຈັດການຂອງ DNR ແມ່ນສະແດງໄວ້ເປັນສີມ່ວງອ່ອນເທິງແຜນທີ່ການເກັບເຫັດ.

**ກົມປາ ແລະສັດປ່າຂອງຣັຖວໍຊິງຕັນ (WDFW)** ບໍ່ອະນຸຍາດການເກັບເຫັດເພື່ອການຄ້າ. ສຳລັບຂໍ້ມູນເພີ່ມເຕີມໃຫ້ໂທຣຫາ 509-575-2740 ຫຼື 509-754-4624. ທີ່ດິນທີ່ມີການຈັດການຂອງ WDFW ແມ່ນສະແດງໄວ້ເປັນສີມ່ວງເຂັ້ມເທິງແຜນທີ່ການເກັບເຫັດ.

**ຫ້ອງການຂອງເຈົ້າເມືອງ Okanogan:** 800-572-6604 **ຫ້ອງການຂອງເຈົ້າເມືອງ Chelan:** 509-667-6875

### ຜູ້ທີ່ຈະໂທຣຫາ—ຂໍ້ມູນຜູ້ຕິດຕໍ່ຂອງປ່າຄຸ້ມຄອງແຫ່ງຊາດ

**Entiat Ranger District**
2108 Entiat Way, Entiat, WA 98822; 509-784-4700. ຊົ່ວໂມງເຮັດວຽກ 8 ໂມງເຊົ້າ ຫາ 4:30 ໂມງບ່າຍ. ວັນຈັນ-ວັນສຸກ.

**Chelan Ranger District**
428 W. Woodin Ave., Chelan, WA 98816; 509-682-4900. ຊົ່ວໂມງເຮັດວຽກ 8 ໂມງເຊົ້າ ຫາ11:30; 12:30 ຫາ 4:30 ໂມງບ່າຍ. ວັນຈັນ-ວັນສຸກ.

**Methow Valley Ranger District**
24 W. Chewuch Road, Winthrop, WA 98862; 509-996-4000. ຊົ່ວໂມງເຮັດວຽກ 8 ໂມງເຊົ້າ ຫາ 4:30 ໂມງບ່າຍ. ວັນຈັນ-ວັນສຸກ

**Forest website:** www.fs.usda.gov/okawen

ພາລະໜ້າທີ່ຂອງ USDA Forest Service ແມ່ນເພື່ອຮັກສາສະພາບທີ່ດີ, ຄວາມຫຼາກຫຼາຍ, ແລະຄວາມອຸດົມສົມບູນຂອງປ່າໄມ້ ແລະທົ່ງຫຍ້າຂອງຊາດເພື່ອໃຫ້ສາມາດຕອບສະໜອງຕໍ່ຄວາມຕ້ອງການຂອງຄົນໃນປັດຈຸບັນແລະຄົນລຸ້ນຕໍ່ໆໄປໃນອະນາຄົດ.

USDA ເປັນຜູ້ຈັດຫາ, ນາຍຈ້າງ, ແລະຜູ້ໃຫ້ກູ້ຢືມທີ່ໃຫ້ໂອກາດເທົ່າທຽມກັນ. ເພື່ອຍື່ນຄຳຮ້ອງຮຽນກ່ຽວກັບເລື່ອງການເລືອກປະຕິບັດ, ໃຫ້ຂຽນໄປຫາ: USDA, Director, Office of Civil Rights, 1400 Independence Avenue, SW, Washington, DC 20250-9410 ຫຼືໂທຣ (800) 795-3272 (ສຽງ), ຫຼື (202) 720-6382 (TDD).